ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 13/ຈຂອປ
ອັດຕະປື, ວັນທີ 06 ພະຈິກ 2025

# ຄໍາສັ່ງ
# ວ່າດ້ວຍ ການຈັດຕັ້ງປະຕິບັດນິຕິກໍາ ໃນການນໍາໃຊ້ນໍ້າໜ້າດິນ ແລະ ນໍ້າໃຕ້ດິນ ພາຍໃນແຂວງອັດຕະປື.

**ເຖິງ:** ບັນດາບໍລິສັດ, ຜູ້ດໍາເນີນກິດຈະການ ຫຼື ໂຄງການລົງທຶນຕ່າງໆ ທີ່ນໍາໃຊ້ນໍ້າໜ້າດິນ ແລະ ນໍ້າໃຕ້ດິນ ພາຍໃນແຂວງອັດຕະປື.

- ອີງຕາມ ມາດຕາ 20 ຂອງກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 75/ສພຊ ລົງວັນທີ 20 ມີນາ 2025;
- ອີງຕາມ ກົດໝາຍວ່າດ້ວຍ ນໍ້າ ແລະ ຊັບພະຍາກອນນໍ້າ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການນໍາໃຊ້ນໍ້າ ສະບັບເລກທີ 6118/ກຊສ, ລົງວັນທີ 29 ພະຈິກ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຄຸນນະພາບນໍ້າ ແລະ ການປ່ອຍນໍ້າເປື້ອນ. ສະບັບເລກທີ 1403/ກຊສ, ລົງວັນທີ 7 ກໍລະກົດ 2023;
- ອີງຕາມໜັງສືສະເໜີ ຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງ. ສະບັບເລກທີ 0739/ກສອປ, ລົງວັນທີ 30 ຕຸລາ 2025.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ສະບັບເລກທີ 23/ສພຊ ລົງວັນທີ 11 ພຶດສະພາ 2017 ແລະ ຂໍ້ຕົກລົງຂອງລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 6118/ກຊສ, ລົງວັນທີ 29 ພະຈິກ 2022. ແນໃສ່ເຮັດໃຫ້ການຄຸ້ມຄອງການນໍາໃຊ້ນໍ້າໜ້າດິນ ແລະ ການບໍລິການກ່ຽວກັບນໍ້າ ແລະ ຊັບພະຍາກອນນໍ້າ ຂອງບັນດາບໍລິສັດ, ໂຄງການ, ຜູ້ປະກອບການຕ່າງໆ ທີ່ມາດໍາເນີນກິດຈະການພາຍໃນແຂວງອັດຕະປື ເຊິ່ງປະກອບມີໂຄງການຂະໜາດນ້ອຍ ທີ່ເປັນຂັ້ນເມືອງຄຸ້ມຄອງ, ໂຄງການຂະໜາດກາງ ທີ່ຂັ້ນແຂວງຄຸ້ມຄອງ ແລະ ໂຄງການໜາດໃຫຍ່ ຂັ້ນສູນກາງຄຸ້ມຄອງ. ສະນັ້ນ; ເພື່ອເປັນການແນະນໍາຂັ້ນຕອນ, ວິທີການຈັດຕັ້ງປະຕິບັດ ຂອງບັນດາບໍລິສັດ, ຜູ້ປະກອບການ ແລະ ໂຄງການພັດທະນາຕ່າງໆ ພາຍໃນແຂວງອັດຕະປື ນັບທັງໂຄງການຂອງລັດ ແລະ ເອກະຊົນ ໃຫ້ມີຄວາມເປັນເອກະພາບ, ຮັບປະກັນທາງດ້ານວິຊາການ ແລະ ຫຼັກການທາງດ້ານກົດໝາຍ ແລະ ລະບຽບການ ແລະ ເປັນບ່ອນອີງໃນການຄິດໄລ່ຄ່າທໍານຽມ-ຄ່າລິການ ຈາກການນໍາໃຊ້ນໍ້າໜ້າດິນ ແລະ ການນໍາໃຊ້ນໍ້າໃຕ້ດິນ ໃຫ້ມີຄວາມເປັນເອກະພາບ ພາຍໃນແຂວງອັດຕະປື.

## ເຈົ້າແຂວງ ອອກຄໍາສັ່ງ:

1. ໃຫ້ບັນດາບໍລິສັດ, ໂຄງການ, ຜູ້ປະກອບການຕ່າງໆ ທີ່ມາດໍາເນີນກິດຈະການພາຍໃນແຂວງອັດຕະປື ທີ່ໄດ້ເຊັນສັນຍາກັບລັດຖະບານ ຫຼື ອົງການປົກຄອງແຂວງແລ້ວ ໄດ້ເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດຕາມຂັ້ນຕອນຂອງລະບຽບການ, ກົດໝາຍ ກ່ຽວກັບວຽກງານຊັບພະຍາກອນນໍ້າ ເພື່ອຮັບປະກັນໃນການນໍາໃຊ້ນໍ້າໜ້າດິນ ແລະ ນໍ້າໃຕ້ດິນ ຢ່າງປະຢັດ, ມີປະສິດທິຜົນສູງສຸດ ແລະ ຮັບປະກັນຕໍ່ຄຸນນະພາບນໍ້າໜ້າດິນ ແລະ ນໍ້າໃຕ້ດິນ;

2. ມອບໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ອົງການປົກຄອງຂັ້ນເມືອງ ແລະ ບັນດາຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ເປັນເຈົ້າການຊຸກຍູ້ບັນດາບໍລິສັດ, ຜູ້ພັດທະນາໂຄງການ ຫຼື ຜູ້ທີ່ດຳເນີນກິດຈະການຕ່າງໆ ຢູ່ພາຍໃນແຂວງ ຕ້ອງໃຫ້ສ້າງແຜນຄຸ້ມຄອງການນຳໃຊ້ນໍ້າໜ້າດິນ ແລະ ນໍ້າໃຕ້ດິນຂອງໂຄງການ ຫຼື ກິດຈະການລົງທຶນຂອງຕົນໃຫ້ລະອຽດ ໂດຍປະຕິບັດຕາມ ມາດຕາ 36, ມາດຕາ 37, ມາດຕາ 38, ມາດຕາ 39, ມາດຕາ 40, ມາດຕາ 41 ໝວດທີ 1 ແລະ ມາດຕາ 49, ມາດຕາ 50, ມາດຕາ 51 ໝວດທີ III ພາກທີ V ຂອງກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017 ແລະ ມາດຕາ 10, ມາດຕາ 11 ໝວດທີ 2 ພາກທີ II. ມາດຕາ 12, ມາດຕາ 14 ໝວດທີ 3 ພາກທີ II. ມາດຕາ 23, ມາດຕາມ 25 ໝວດທີ 2 ພາກທີ III. ມາດຕາ 28, ມາດຕາ 30 ໝວດທີ 3 ພາກທີ III ແລະ ມາດຕາ 39 ໝວດທີ 4 ພາກທີ III ຂອງຂໍ້ຕົກລົງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 6118/ກຊສ, ລົງວັນທີ 29 ພະຈິກ 2022;
3. ບັນດາບໍລິສັດ, ເຈົ້າຂອງໂຄງການ ຫຼື ຜູ້ດຳເນີນກິດຈະການຕ່າງໆ ພາຍໃນແຂວງ ຕ້ອງໃຫ້ການຮ່ວມມື ກັບພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ແລະ ບັນດາຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ໃນການສະໜອງຂໍ້ມູນຈຸດການນຳໃຊ້ນໍ້າ, ປະລິມານການນຳໃຊ້ນໍ້າໃນແຕ່ລະປີ ຂອງໂຄງການ/ກິດຈະການ ທີ່ຢູ່ໃນເຂດຄວາມຮັບຜິດຊອບຂອງຕົນ. ພ້ອມທັງສ້າງແຜນຄຸ້ມຄອງນຳໃຊ້ນໍ້າໜ້າດິນ ແລະ ນໍ້າໃຕ້ດິນຂອງໂຄງການໃຫ້ລະອຽດຈະແຈ້ງ ເພື່ອສະເໜີຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ອອກອະນຸຍາດການນຳໃຊ້ນໍ້າໃຫ້ແກ່ໂຄງການ ຕາມລະບຽບການ ແລະ ກົດໝາຍທີ່ວາງອອກ;
4. ຖ້າບໍລິສັດ ຫຼື ໂຄງການໃດ ທີ່ມີໃບອະນຸຍາດການນຳໃຊ້ນໍ້າໜ້າດິນ ແລະ ນໍ້າໃຕ້ດິນ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ (ຂັ້ນສູນກາງ, ແຂວງ ແລະ ເມືອງ) ແລ້ວ ແມ່ນໃຫ້ລາຍງານເປັນລາຍລັກອັກສອນ ຕໍ່ການຈັດຕັ້ງປະຕິບັດບັນດາກິດຈະກຳ ກ່ຽວກັບການຄຸ້ມຄອງການນຳໃຊ້ນໍ້າໜ້າດິນ ແລະ ນໍ້າໃຕ້ດິນຂອງຕົນ ລວມທັງສຳເນົາແຜນການຄຸ້ມຄອງການນຳໃຊ້ນໍ້າຂອງໂຄງການຕົນ ສົ່ງໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ທີ່ໂຄງການຕັ້ງຢູ່ ເພື່ອເປັນຖານຂໍ້ມູນໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ໄລ່ລຽງ ເພື່ອຈັດເກັບຄ່າທຳນຽມ ແລະ ຄ່າບໍລິການຕາມລັດຖະບັດຍັດຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 28 ກັນຍາ 2023 ວ່າດ້ວຍອັດຕາຄ່າຊັບພະຍາກອນທຳມະຊາດ ແລະ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ;
5. ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີຈຸດປະສົງດຳເນີນການບໍລິການກ່ຽວກັບນໍ້າ ແລະ ຊັບພະຍາກອນນໍ້າ ໃຫ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ນຳຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ແລະ ຕ້ອງໄດ້ຂໍອະນຸຍາດທາງດ້ານວິຊາການ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;
6. ບັນດາບໍລິສັດ, ເຈົ້າຂອງໂຄງການ, ຜູ້ດຳເນີນກິດຈະການຕ່າງໆພາຍໃນແຂວງ ທີ່ມີການນຳໃຊ້ນໍ້າໜ້າດິນ ແລະ ນໍ້າໃຕ້ດິນເຂົ້າໃນກິດຈະການຂອງຕົນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ;
7. ມອບໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ເປັນເຈົ້າການເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍຄຳສັ່ງສະບັບນີ້ ໃຫ້ມີປະສິດທິຜົນສູງ;
8. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ບ່ອນສົ່ງ:

| | | |
|---|---|---|
| - | ຫ້ອງວ່າການແຂວງ | 01 ສະບັບ; |
| - | ພະແນກກະສິກຳ ແລະ ສິ່ງແວດລ້ອມ | 01 ສະບັບ. |
| - | ຫ້ອງການ ກສ ເມືອງ, ເມືອງລະ | 01 ສະບັບ; |
| - | ບັນດາບໍລິສັດ/ໂຄງການ ບ່ອນລະ | 01 ສະບັບ; |
| - | ພາກສ່ວນການກ່ຽວຂ້ອງ ບ່ອນລະ | 01 ສະບັບ; |
| - | ເກັບຮັກສາໄວ້ | 01 ສະບັບ. |

ແຂວງອັດຕະປື
ເຈົ້າແຂວງ

ພັທ ວັນທອງ ກອງມະນີ